ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສື່ງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ພາຍໃຕ້ມາດຕາ IV ຂອງ ກອງທຶນການເງິນສາກົນ ປະຈຳປີ 2021 ຜ່ານລະບົບທາງໄກ

## (International Monetary Fund Article IV Consultation 2021)



ໃນລະຫວ່າງວັນທີ 21-22 ທັນວາ 2021 ຜ່ານມາ, ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ນຳໂດຍ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ພ້ອມດ້ວຍຄະນະນຳຈາກຂະແໜງການທີ່ກ່ຽວຂ້ອງໄດ້ສຳເລັດການເຂົ້າຮ່ວມຮັບຟັງຜົນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ພາຍໃຕ້ມາດຕາ IV ຂອງ ກອງທຶນການເງິນສາກົນ ປະຈຳປີ 2021 ຜ່ານລະບົບທາງໄກ (IMF Article IV Consultation 2021).

ການປະເມີນເສດຖະກິດມະຫາພາກ ສປປ ລາວ ໃນປີ 2021 ໄດ້ຈັດຂຶ້ນຜ່ານກອງປະຊຸມທາງໄກໃນລະຫວ່າງວັນທີ 6-21 ທັນວາ 2021 ທີ່ຜ່ານມາ. ໃນນັ້ນ, ຄະນະຂອງ IMF ນຳທີມໂດຍ ທ່ານ Alasdair Scott, ຫົວໜ້າທີມປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ຕາງໜ້າຈາກ ຫ້ອງການ IMF ສຳນັກງານໃຫຍ່ ໄດ້ພົບປະເຮັດວຽກກັບພາກສ່ວນປິ່ນອ້ອມເສດຖະກິດມະຫາພາກຂອງ ສປປ ລາວ ເປັນຕົ້ນແມ່ນ ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ, ກະຊວງແຜນການແລະການລົງທຶນ, ກະຊວງອຸດສາຫະກຳແລະການຄ້າ, ກະຊວງພະລັງງານແລະບໍ່ແຮ່ ແລະ ບັນດາທະນາຄານທຸລະກິດຈຳນວນໜຶ່ງ ເພື່ອຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໜ້າວຽກຂອງແຕ່ລະພາກສ່ວນ ທີ່ໄດ້ປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດໂດຍລວມຂອງ ສປປ ລາວ.

ສຳລັບຜົນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ໃນຄັ້ງນີ້,  IMF ໄດ້ສະຫຼຸບວ່າ: ເສດຖະກິດຂອງ ສປປ ລາວ ກໍ່ຄືຫຼາຍປະເທດໃນທົ່ວໂລກແມ່ນໄດ້ຮັບຜົນກະທົບຈາກການແຜ່ລະບາດໂຄວິດ-19 ສົ່ງຜົນໃຫ້ການຂະຫຍາຍຕົວຂອງເສດຖະກິດມີຈັງຫວະທີ່ຊ້າລົງ. ໃນປີ 2021, IMF ຄາດວ່າ ເສດຖະກິດ ສປປ ລາວ ຈະຂະຫຍາຍຕົວໃນ

ອັດຕາ 2,1% ແລະ ຈະເພີ່ມເປັນ 3% ໃນປີ 2022 ໂດຍມີຂະແໜງກະສິກຳ ແລະ ອຸດສາຫະກຳເປັນຕົວຂັບເຄື່ອນການຂະຫຍາຍຕົວ. ພ້ອມນີ້, IMF ກໍ່ຍັງເຫັນວ່າການຂະຫຍາຍຕົວຂອງເສດຖະກິດ ສປປ ລາວ ຍັງບາງຄວາມສ່ຽງຈາກພາຍໃນ ແລະ ພາຍນອກທີ່ອາດສົ່ງຜົນຕໍ່ການຂະຫຍາຍຕົວຂອງເສດຖະກິດໃນໄລຍະຍາວ ເປັນຕົ້ນແມ່ນ ອັດຕາເງິນເຟີ້ທີ່ເພີ່ມຂຶ້ນ, ອັດຕາແລກປ່ຽນທີ່ມີຄວາມຜັນຜວນ ແລະ ອື່ນໆ.

ໃນໂອກາດນີ້, ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ສະແດງທັດສະນະຢ່າງໜັກແໜ້ນຕໍ່ກັບຄວາມຕັ້ງໃຈຂອງລັດຖະບານ ສປປ ລາວ ເວົ້າລວມ ເວົ້າສະເພາະກໍຄືກະຊວງກ່ຽວຂ້ອງ ໃນການຮັບມືກັບບັນດາຄວາມສ່ຽງໃນດ້ານຕ່າງໆ ໂດຍສະເພາະແມ່ນການກຳນົດວາລະແຫ່ງຊາດ ເພື່ອຮັບປະກັນໃຫ້ການຂະຫຍາຍຕົວຂອງເສດຖະກິດດຳເນີນໄປດ້ວຍຄວາມເຂັ້ມແຂງ ແລະ ຍືນຍົງ ທັງນີ້ກໍເພື່ອສ້າງຄວາມເຊື່ອໝັ້ນໃຫ້ສາກົນ ກໍຄືນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ.



ໃນທ້າຍກອງປະຊຸມ ທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ກ່າວຄຳຂອບໃຈຕໍ່ທາງຫ້ອງການ IMF ພ້ອມດ້ວຍຄະນະທີ່ໄດ້ເອົາໃຈໃສ່ໃນການຕິດຕາມປະເມີນ ແລະ ໃຫ້ຄຳແນະນຳໃນການພັດທະນາເສດຖະກິດມະຫາພາກຂອງ ສປປ ລາວ. ພ້ອມທັງຕີລາຄາສູງ ກ່ຽວກັບການຊ່ວຍເຫຼືອທາງດ້ານວິຊາການ ຈາກກອງທຶນການເງິນສາກົນ ເພື່ອຂ້າງຂີດຄວາມອາດສາມາດໃນວຽກງານເສດຖະກິດມະຫາພາກ ໃນໄລຍະຜ່ານມາ.

ການມາປະເມີນສະພາບເສດຖະກິດພາຍໃຕ້ ມາດຕາ IV ຂອງກອງທຶນການເງິນສາກົນ ແມ່ນວາລະສຳຄັນ ທີ່ໄດ້ຈັດຕັ້ງປະຕິບັດໃນແຕ່ລະປີ ເພື່ອປະເມີນສະພາບເສດຖະກິດມະຫາພາກຂອງປະເທດສະມາຊິກ ພ້ອມທັງໃຫ້ຄຳແນະນຳໃນການສ້າງເຄື່ອງມື ແລະ ວາງນະໂຍບາຍຄຸ້ມຄອງເສດຖະກິດມະຫາພາກຂອງປະເທດໃຫ້ມີຄວາມເຂັ້ມແຂງ.

*ຂ່າວ: ກົມຮ່ວມມືສາກົນ*